ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຄຳແນະນຳ

## ການສ້າງນະໂຍບາຍ ສຳລັບວຽກງານ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

ກົມນະໂຍບາຍ ແລະ ນິຕິກຳ
ກະຊວງກະສິກຳ ແລະ ປ່າໄມ້
2021

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

0148
ເລກທີ ............/ກປ
ນະຄອນຫຼວງວຽງຈັນ, ວັນທີ...01 FEB 2021

# ຂໍ້ຕົກລົງ
## ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ຄຳແນະນຳ ການສ້າງນະໂຍບາຍ ພັດທະນາວຽກງານ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017;
- ອີງຕາມ ໜັງສືສະເໜີ ຂອງກົມນະໂຍບາຍ ແລະ ນິຕິກຳ ສະບັບເລກທີ 1013/ກນນ, ລົງວັນທີ 22 ທັນວາ 2020.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ:

**ມາດຕາ 1** ອະນຸມັດ ຮັບຮອງ ແລະ ປະກາດໃຊ້ ຄຳແນະນຳ ການສ້າງນະໂຍບາຍ ພັດທະນາວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ.

**ມາດຕາ 2** ມອບໃຫ້ ກົມນະໂຍບາຍ ແລະ ນິຕິກຳ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໂຄສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ຄຳແນະນຳ ການສ້າງນະໂຍບາຍ ພັດທະນາວຽກງານ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 1.

**ມາດຕາ 3** ຫ້ອງການ, ບັນດາກົມ, ສະຖາບັນ ແລະ ທຽບເທົ່າ ອ້ອມຂ້າງກະຊວງ ກະສິກຳ ແລະ ປ່າໄມ້, ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ບ່ອນນຳສົ່ງ:

1. ທ່ານ ລມຕ, ຮລມຕ — 05 ສະບັບ (ເພື່ອລາຍງານ)
2. ຫ້ອງການກະຊວງ — 01 ສະບັບ (ເພື່ອຊາບ)
3. ພະແນກເລຂານຸການ ແລະ ພິທີການ — 01 ສະບັບ
4. ເກັບມ້ຽນ — 01 ສະບັບ

ເພັດ ພົມພິພັກ

## ຄຳນຳ

ນະໂຍບາຍມີຄວາມສຳຄັນແລະສ້າງຂຶ້ນເພື່ອຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດເຊິ່ງມີຄວາມຈຳເປັນທີ່ຕ້ອງໄດ້ກຳນົດເປົ້າໝາຍ ນະໂຍບາຍ ເພື່ອສະໜັບສະໜູນຢ່າງເໝາະສົມ, ການສ້າງນະໂຍບາຍໃນວຽກງານກະສິກຳ, ປ່າໄມ້ ແລະພັດທະນາຊົນນະບົດສ່ວນໃຫຍ່ແມ່ນຕິດພັນກັບຫຼາຍຂະແໜງການ. ດັ່ງນັ້ນ, ຕ້ອງການປະສານສົມທົບ ແລະ ການມີສ່ວນຮ່ວມຂອງທຸກຂະແໜງການທີ່ກ່ຽວຂ້ອງທັງພາຍໃນກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການຈັດຕັ້ງສາກົນເພື່ອຮັບປະກັນໃຫ້ສອດຄ່ອງກັບແຜນການຈັດຕັ້ງປະຕິບັດຜັນຂະຫຍາຍທິດທາງ ແລະຄາດໝາຍທີ່ວາງໄວ້ໃຫ້ບັນລຸຜົນສຳເລັດຕາມແຜນພັດທະນາເສດຖະກິດ–ສັງຄົມແຫ່ງຊາດໃນແຕ່ລະໄລຍະ.

ເພື່ອເປັນບ່ອນອີງ ໃນການກະກຽມ, ຮ່າງ ແລະ ນຳສະເໜີພິຈາລະນາຮັບຮອງນະໂຍບາຍ ໃນຂະແໜງກະສິກຳແລະ ປ່າໄມ້, ກົມນະໂຍບາຍ ແລະ ນິຕິກຳ ຈຶ່ງໄດ້ສ້າງຄຳແນະນຳການສ້າງນະໂຍບາຍສຳລັບວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ.ຄຳແນະນຳສະບັບນີ້ ປະກອບມີ 03 ພາກຄື:(1) ພາກສະເໜີ; (2) ຂັ້ນຕອນການສ້າງນະໂຍບາຍແລະ (3) ການມີສ່ວນຮ່ວມຂອງພາກສ່ວນຕ່າງໆໃນແຕ່ລະຂັ້ນຕອນການສ້າງແມ່ນເລີ່ມຈາກການກະກຽມແນວຄວາມຄິດ, ການກຳນົດນະໂຍບາຍເພື່ອສະເໜີການນຳກະຊວງກະສິກຳແລະປ່າໄມ້ໃນການພິຈາລະນາອະນຸມັດຮ່າງນະໂຍບາຍຈົນຮອດຂັ້ນຕອນການຂຽນເອກະສານນະໂຍບາຍ,ການປຶກສາຫາລືກັບພາກສ່ວນກ່ຽວຂ້ອງຈົນເຖິງການຮັບຮອງ ແລະ ປະກາດໃຊ້ ນະໂຍບາຍດັ່ງກ່າວ.

ຄຳແນະນຳສະບັບນີ້ສ້າງຂຶ້ນເພື່ອເປັນເອກະສານແນະນຳໃນການຈັດຕັ້ງປະຕິບັດວຽກງານການສ້າງນະໂຍບາຍຂອງຂະແໜງກະສິກຳ ແລະປ່າໄມ້ ໂດຍສະເພາະເພື່ອໃຫ້ມີຄວາມສະດວກໄປຕາມທິດທາງດຽວກັນ ແລະເປັນເອກະພາບໃນຂົງເຂດວຽກງານກະສິກຳ, ປ່າໄມ້ແລະພັດທະນາຊົນນະບົດ. ນອກຈາກນີ້, ຍັງສາມາດນຳໃຊ້ຄຳແນະນຳດັ່ງກ່າວ ເຂົ້າໃນການສອນ ຫຼືຝຶກອົບຮົມກ່ຽວກັບການສ້າງຄວາມເຂັ້ມແຂງດ້ານນະໂຍບາຍໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງທັງສູນກາງແລະທ້ອງຖິ່ນ.

**ຫົວໜ້າກົມ**

**ປອ. ທັດສະກາ ສະພັງທອງ**

# ສາລະບານ


ຄຳນຳ.................................................................................... i

ສາລະບານ.................................................................................... ii

ພາກທີ 1: ພາກສະເໜີ.................................................................................... 1

ຈຸດປະສົງ.................................................................................... 1

ຄວາມສຳຄັນ.................................................................................... 1

ລະດັບຄາດໝາຍ.................................................................................... 1

ພາກທີ 2: ຂັ້ນຕອນການສ້າງນະໂຍບາຍ.................................................................................... 1

ຂັ້ນຕອນທີ 1: ກະກຽມ ແລະ ອະນຸມັດ ແນວຄວາມຄິດດ້ານນະໂຍບາຍ.................................................................................... 1

ຂັ້ນຕອນທີ 2: ຂຽນນະໂຍບາຍ ສະບັບຮ່າງ.................................................................................... 2

ຂັ້ນຕອນທີ 3: ປຶກສາຫາລື ແລະ ປະກອບຄຳເຫັນໃສ່ ຮ່າງ ນະໂຍບາຍ ຂັ້ນສູນກາງ.................................................................................... 2

ຂັ້ນຕອນທີ 4: ປຶກສາຫາລື ແລະ ປະກອບຄຳເຫັນໃສ່ ຮ່າງ ນະໂຍບາຍ ຂັ້ນທ້ອງຖິ່ນ.................................................................................... 2

ຂັ້ນຕອນທີ 5: ປຶກສາຫາລື ແລະ ປະກອບຄຳເຫັນໃສ່ ຮ່າງ ນະໂຍບາຍ ກັບພາກສ່ວນທີ່ກ່ຽວຂ້ອງ.................................................................................... 3

ຂັ້ນຕອນທີ 6: ປັບປຸງ ຮ່າງ ນະໂຍບາຍ ສະບັບສຸດທ້າຍ.................................................................................... 3

ຂັ້ນຕອນທີ 7: ຮັບຮອງ ແລະ ປະກາດໃຊ້ ນະໂຍບາຍ.................................................................................... 3

ພາກທີ 3: ການມີສ່ວນຮ່ວມຂອງພາກສ່ວນຕ່າງໆ ແຕ່ລະຂັ້ນຕອນການສ້າງນະໂຍບາຍ.................................................................................... 3

ເອກະສານຊ້ອນທ້າຍ 1: ໂຄງຮ່າງ " ແນວຄວາມຄິດ ສຳລັບສ້າງນະໂຍບາຍ ".................................................................................... 5

ເອກະສານຊ້ອນທ້າຍ 2: ໂຄງຮ່າງ " ນະໂຍບາຍ ".................................................................................... 8

# ພາກທີ 1: ພາກສະເໜີ

### ຈຸດປະສົງ

ຄຳແນະນຳການສ້າງນະໂຍບາຍນີ້ ມີຈຸດປະສົງ ເພື່ອເປັນບ່ອນອີງໃນການແນະນຳ ວິທີການສ້າງນະໂຍບາຍ ໃຫ້ແກ່ຫ້ອງການ, ບັນດາກົມ, ສະຖາບັນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້; ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ໃຫ້ມີຄວາມເປັນເອກະພາບ ທາງດ້ານຂະບວນການ, ວິທີການ ໃນການສ້າງນະໂຍບາຍ ເພື່ອຊຸກຍູ້, ສະໜັບສະໜູນສຳລັບວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ.

### ຄວາມສຳຄັນ

ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຕາມແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ແລະ ແຜນຍຸດທະສາດ ຂອງກະຊວງກະສິກຳ ແລະ ປ່າໄມ້ ໃຫ້ມີຜົນສຳເລັດ ຈຳເປັນຕ້ອງມີນະໂຍບາຍສະໜັບສະໜູນ ແລະ ຊຸກຍູ້ສົ່ງເສີມທີ່ເໝາະສົມ. ດັ່ງນັ້ນ, ຈຶ່ງຕ້ອງມີຄຳແນະນຳສະເພາະໃນການສ້າງນະໂຍບາຍ ໃຫ້ມີຄວາມເປັນເອກະພາບ ໃນຂະແໜງການກະສິກຳ ແລະ ປ່າໄມ້.

### ລະດັບຄາດໝາຍ

ຫ້ອງການ, ບັນດາກົມ, ສະຖາບັນ ອ້ອມຂ້າງ ກະຊວງກະສິກຳ ແລະ ປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ໃຫ້ມີຄວາມເຂົ້າໃຈຢ່າງລະອຽດ ກ່ຽວກັບການສ້າງນະໂຍບາຍ ແລະ ສາມາດນຳໄປຈັດຕັ້ງປະຕິບັດ ຕາມໜ້າທີ່ຄວາມຮັບຜິດຊອບຂອງຕົນ ໃຫ້ສຳເລັດຢ່າງມີປະສິດທິພາບ. ນອກຈາກນັ້ນ, ຄຳແນະນຳນີ້ ຍັງສາມາດນຳໃຊ້ເປັນເອກະສານປະກອບ ແລະ ອ້າງອີງໃນການສອນ ຫຼື ຝຶກອົບຮົມ ກ່ຽວກັບການພັດທະນານະໂຍບາຍ ໃນວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ.

# ພາກທີ 2: ຂັ້ນຕອນການສ້າງນະໂຍບາຍ

ການສ້າງນະໂຍບາຍ ໃນວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ປະກອບມີ 07 ຂັ້ນຕອນ ຄື:

### ຂັ້ນຕອນທີ 1: ກະກຽມ ແລະ ອະນຸມັດ ແນວຄວາມຄິດດ້ານນະໂຍບາຍ

ຫ້ອງການ, ບັນດາກົມ, ສະຖາບັນ ອ້ອມຂ້າງ ກະຊວງກະສິກຳ ແລະ ປ່າໄມ້; ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ທີ່ຕ້ອງການສ້າງນະໂຍບາຍ ຕ້ອງໄດ້ສະເໜີຫົວຂໍ້ ແລະ ແນວຄວາມຄິດ ໂດຍຜ່ານກົມນະໂຍບາຍ ແລະ ນິຕິກຳ ນຳສະເໜີການນຳກະຊວງກະສິກຳ ແລະ ປ່າໄມ້ພິຈາລະນາອະນຸມັດ ໂດຍອີງໃສ່ທິດຊີ້ນຳຈາກຂັ້ນເທິງໃຫ້ຄົ້ນຄວ້າບັນຫາທີ່ພົ້ນເດັ່ນໃນສັງຄົມ ເພື່ອແກ້ໄຂບັນຫາໃຫ້ສອດຄ່ອງກັບແນວທາງ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຜ່ານ

ການສັງລວມຂໍ້ມູນຕ່າງໆ, ຜົນການວິເຄາະ-ວິໄຈ ສະພາບການ ແລະ ຄວາມຕ້ອງການດ້ານນະໂຍບາຍ. ການກະກຽມແນວຄວາມຄິດດ້ານນະໂຍບາຍ ເພື່ອນໍາສະເໜີຂໍສ້າງນະໂຍບາຍໃຫ້ຂຽນອີງຕາມໂຄງຮ່າງແນວຄວາມຄິດສໍາລັບສ້າງນະໂຍບາຍ ຢູ່ໃນເອກະສານຊ້ອນທ້າຍ 1.

ຫຼັງຈາກກະກຽມແນວຄວາມຄິດ ດ້ານນະໂຍບາຍ ໃນເບື້ອງຕົ້ນແລ້ວ ສະເໜີໃຫ້ຜ່ານແນວຄວາມຄິດດ້ານນະໂຍບາຍ ຕໍ່ສະພາວິທະຍາສາດເຕັກນິກກະສິກໍາ ແລະ ປ່າໄມ້ ເພື່ອຄົ້ນຄວ້າ ແລະ ປະກອບຄໍາເຫັນໃສ່ແນວຄວາມຄິດດ້ານນະໂຍບາຍດັ່ງກ່າວ.

ໄລຍະເວລາໃນການກະກຽມ ແລະ ອະນຸມັດ ແນວຄວາມຄິດດ້ານນະໂຍບາຍ ແມ່ນຂຶ້ນກັບປະເດັນບັນຫາ, ຖ້າເປັນບັນຫາໃໝ່ ແລະ ຕິດພັນກັບຫຼາຍພາກສ່ວນ ໂດຍໃຊ້ເວລາພາຍໃນ 2 ເດືອນ.

### ຂັ້ນຕອນທີ 2: ຂຽນນະໂຍບາຍ ສະບັບຮ່າງ

ຫຼັງຈາກການນໍາກະຊວງກະສິກໍາ ແລະ ປ່າໄມ້ ເຫັນດີອະນຸມັດໃຫ້ມີການຮ່າງເອກະສານດ້ານນະໂຍບາຍ, ພາກສ່ວນກ່ຽວຂ້ອງ ເລີ່ມຕົ້ນຮ່າງເອກະສານນະໂຍບາຍ ໂດຍໃຫ້ຂຽນໄປຕາມໂຄງຮ່າງນະໂຍບາຍ ຢູ່ໃນເອກະສານຊ້ອນທ້າຍ 2. ຖ້າຈໍາເປັນຍັງມີຄວາມຕ້ອງການຂໍ້ມູນເພີ່ມຕື່ມ ຫຼື ຍັງບໍ່ທັນຈະແຈ້ງ ເພື່ອວິເຄາະ-ວິໄຈ ຕ້ອງໄດ້ສັງລວມຂໍ້ມູນ ແລະ ປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງຄືນຕື່ມອີກ ນັບທັງຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ໂດຍໃຊ້ເວລາພາຍໃນ 3 ເດືອນ.

### ຂັ້ນຕອນທີ 3: ປຶກສາຫາລື ແລະ ປະກອບຄໍາເຫັນໃສ່ ຮ່າງ ນະໂຍບາຍ ຂັ້ນສູນກາງ

ພາຍຫຼັງໄດ້ຮັບ ເອກະສານນະໂຍບາຍ ສະບັບຮ່າງ ຈາກພາກສ່ວນທີ່ຂໍສະເໜີສ້າງນະໂຍບາຍ, ກົມນະໂຍບາຍ ແລະ ນິຕິກໍາ ຈະໄດ້ກວດກາ ແລະ ນໍາສະເໜີຮ່າງເອກະສານນະໂຍບາຍນັ້ນໃຫ້ການນໍາກະຊວງກະສິກໍາ ແລະ ປ່າໄມ້ ເພື່ອມີຄໍາເຫັນ ແລະ ພິຈາລະນາ.

ຖ້າເຫັນວ່າມີຄວາມຈໍາເປັນ, ການນໍາກະຊວງກະສິກໍາ ແລະ ປ່າໄມ້ ຈະສະເໜີໃຫ້ຜ່ານຮ່າງເອກະສານນະໂຍບາຍ ຕໍ່ສະພາວິທະຍາສາດເຕັກນິກກະສິກໍາ ແລະ ປ່າໄມ້ ເພື່ອຄົ້ນຄວ້າ ແລະ ປະກອບຄໍາເຫັນໃນຂັ້ນສູນກາງໂດຍໃຊ້ເວລາພາຍໃນ 1 ເດືອນ.

### ຂັ້ນຕອນທີ 4: ປຶກສາຫາລື ແລະ ປະກອບຄໍາເຫັນໃສ່ ຮ່າງ ນະໂຍບາຍ ຂັ້ນທ້ອງຖິ່ນ

ພາຍຫຼັງໄດ້ປຶກສາຫາລືເປັນເອກະພາບຕໍ່ ຮ່າງ ນະໂຍບາຍ ໃນຂັ້ນສູນກາງແລ້ວ ເພື່ອຄວາມເປັນເອກະພາບກັບຂັ້ນທ້ອງຖິ່ນ, ພາກສ່ວນທີ່ສະເໜີສ້າງນະໂຍບາຍ ຈະໄດ້ສົມທົບກັບກົມນະໂຍບາຍ ແລະ ນິຕິກໍາ ລົງເອົາຮ່າງດັ່ງກ່າວໄປປຶກສາຫາລື ແລະ ປະກອບຄໍາເຫັນ ໃນຂັ້ນທ້ອງຖິ່ນ ໂດຍໃຊ້ເວລາພາຍໃນ 1 ເດືອນ.

### ຂັ້ນຕອນທີ 5: ປຶກສາຫາລື ແລະ ປະກອບຄຳເຫັນໃສ່ ຮ່າງ ນະໂຍບາຍ ກັບພາກສ່ວນທີ່ກ່ຽວຂ້ອງ

ພາກສ່ວນທີ່ຂໍສະເໜີສ້າງນະໂຍບາຍ ໂດຍສົມທົບກັບກົມນະໂຍບາຍ ແລະ ນິຕິກຳ ດຳເນີນການປຶກສາຫາລື ແລະ ທາບທາມຄຳເຫັນໃສ່ ຮ່າງ ນະໂຍບາຍ ກັບພາກສ່ວນທີ່ກ່ຽວຂ້ອງຕ່າງໆ ໃນສັງຄົມ ເຊັ່ນ: ຜູ້ຜະລິດ, ພາກສ່ວນທຸລະກິດ, ຜູ້ບໍລິໂພກ, ຄູ່ຮ່ວມພັດທະນາ ແລະ ອື່ນໆ ໂດຍໃຊ້ເວລາພາຍໃນ 1 ເດືອນ.

### ຂັ້ນຕອນທີ 6: ປັບປຸງ ຮ່າງ ນະໂຍບາຍ ສະບັບສຸດທ້າຍ

ຫຼັງຈາກພາກສ່ວນທີ່ຂໍສະເໜີສ້າງນະໂຍບາຍ ປັບປຸງ ຮ່າງເອກະສານນະໂຍບາຍ ມາເປັນສະບັບສຸດທ້າຍ ຕາມຄຳເຫັນຈາກການປຶກສາຫາລືຕ່າງໆ, ກົມນະໂຍບາຍ ແລະ ນິຕິກຳ ກໍ່ຈະໄດ້ກວດກາ ແລະ ນຳສະເໜີຮ່າງເອກະສານນະໂຍບາຍ ສະບັບສຸດທ້າຍ ໃຫ້ການນຳກະຊວງກະສິກຳ ແລະ ປ່າໄມ້ ເພື່ອພິຈາລະນາອານຸມັດ ໂດຍໃຊ້ເວລາພາຍໃນ 1 ເດືອນ.

### ຂັ້ນຕອນທີ 7: ຮັບຮອງ ແລະ ປະກາດໃຊ້ ນະໂຍບາຍ

ກະຊວງກະສິກຳ ແລະ ປ່າໄມ້ ນຳສົ່ງເອກະສານນະໂຍບາຍສະບັບສຸດທ້າຍ ໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເອົາເຂົ້າວາລະກອງປະຊຸມຄະນະລັດຖະບານ ພິຈາລະນາຮັບຮອງ ແລະ ປະກາດໃຊ້.

ກໍລະນີ ນະໂຍບາຍດັ່ງກ່າວ ຂຶ້ນກັບຄວາມຮັບຜິດຊອບຂອງຫຼາຍຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຈະສົ່ງໃຫ້ຄະນະເລຂາທິການສະພາແຫ່ງຊາດ ເອົາເຂົ້າວາລະກອງປະຊຸມສະພາແຫ່ງຊາດ ເພື່ອຮັບຮອງ ຕາມລະບຽບການ.

ໄລຍະເວລາໃນການຮັບຮອງ ແລະ ປະກາດໃຊ້ ນະໂຍບາຍ ຂຶ້ນກັບການກຳນົດ ຂອງລັດຖະບານ ແລະ ສະພາແຫ່ງຊາດ.

ສັງລວມແລ້ວ ໄລຍະເວລາທັງໝົດ ທີ່ໃຊ້ໃນການສ້າງນະໂຍບາຍ ແມ່ນພາຍໃນ 1 ປີ.

## ພາກທີ 3: ການມີສ່ວນຮ່ວມຂອງພາກສ່ວນຕ່າງໆ ແຕ່ລະຂັ້ນຕອນການສ້າງ ນະໂຍບາຍ

ການສ້າງນະໂຍບາຍໃນວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ເຊິ່ງຕິດພັນກັບຫຼາຍຂະແໜງການ. ດັ່ງນັ້ນ, ການສ້າງນະໂຍບາຍ ຈະຕ້ອງມີການປະສານສົມທົບ ແລະ ມີສ່ວນຮ່ວມ ຂອງຫຼາຍພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການຈັດຕັ້ງອື່ນໆ ເພື່ອຮັບປະກັນໃຫ້ມີຄວາມສອດຄ່ອງ, ສະໜັບສະໜູນຊຶ່ງກັນ ແລະ ກັນ ໃຫ້ແກ່ການຈັດຕັ້ງປະຕິບັດບັນດານະໂຍບາຍ, ຍຸດທະສາດ ແລະ ແຜນງານຕ່າງໆ ໄປຕາມທິດນຳ ຂອງລັດຖະບານແຫ່ງ ສປປ ລາວ ກໍຄືມະຕິຄຳສັ່ງຕ່າງໆ ຂອງສູນກາງພັກວາງອອກ.

ການມີສ່ວນຮ່ວມ ຂອງພາກສ່ວນທີ່ກ່ຽວຂ້ອງ ແມ່ນມີຄວາມສຳຄັນຫຼາຍໃນແຕ່ລະຂັ້ນຕອນ ຂອງການສ້າງນະໂຍບາຍ ນັບແຕ່ເລີ່ມຕົ້ນການກຳນົດແນວຄວາມຄິດດ້ານນະໂຍບາຍ ເພື່ອສະເໜີການນຳກະຊວງ ເຫັນດີໃຫ້ດຳເນີນການຂຽນຮ່າງນະໂຍບາຍ ຈົນຮອດຂັ້ນຕອນການຮ່າງ, ປະກອບຄຳເຫັນໃສ່ຮ່າງນະໂຍບາຍ ແລະ ປັບປຸງຮ່າງນະໂຍບາຍເປັນສະບັບສົມບູນ. ແຕ່ລະພາກສ່ວນມີບົດບາດ ແລະ ໜ້າທີ່ແຕກຕ່າງກັນໃນແຕ່ລະຂັ້ນຕອນ ເຊັ່ນ: ຫ້ອງການ, ບັນດາກົມ, ສະຖາບັນ ແລະ ທຽບເທົ່າ ອ້ອມຂ້າງ ກະຊວງກະສິກຳ ແລະ ປ່າໄມ້; ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ຈະມີສ່ວນຮ່ວມຕໍ່ຂັ້ນຕອນການສ້າງນະໂຍບາຍ; ສຳລັບການນຳກະຊວງ ຈະມີສ່ວນຮ່ວມໃນໄລຍະເລີ່ມຕົ້ນ ຂອງການໃຫ້ທິດຊີ້ນຳ ໃນການກຳນົດປະເດັນບັນຫາທີ່ຕ້ອງການນະໂຍບາຍ ເພື່ອນຳມາແກ້ໄຂ, ປະກອບຄຳເຫັນ ແລະ ອະນຸມັດຮ່າງນະໂຍບາຍ ເພື່ອສະເໜີການນຳຂັ້ນເທິງຕໍ່ໄປ; ສຳລັບ ພາກສ່ວນ ຊາວກະສິກອນ, ນັກທຸລະກິດ, ຜູ້ບໍລິໂພກ, ຜູ້ໃຫ້ທຶນ ແລະ ອື່ນໆ ຈະມີສ່ວນຮ່ວມໃນຂະບວນການປຶກສາຫາລື ແລະ ປະກອບຄຳຄິດເຫັນ ເພື່ອປັບປຸງຮ່າງນະໂຍບາຍໃຫ້ຄົບຖ້ວນສົມບູນ.

# ເອກະສານຊ້ອນທ້າຍ 1: ໂຄງຮ່າງ " ແນວຄວາມຄິດ ສໍາລັບສ້າງນະໂຍບາຍ "

---

**ຈຸດປະສົງ:** ເພື່ອສະເໜີຂໍທິດຊີ້ນໍາ ແລະ ອະນຸມັດ ກ່ຽວກັບການກະກຽມ ເອກະສານທາງດ້ານນະໂຍບາຍ.

**ສະເໜີໂດຍ:** ຫ້ອງການ, ບັນດາກົມ, ສະຖາບັນ ອ້ອມຂ້າງ ກະຊວງກະສິກໍາ ແລະ ປ່າໄມ້; ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງ.

**ສົ່ງເຖິງ:** ທ່ານລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້.

**ຄວາມຍາວ:** ບໍ່ເກີນ 03 ໜ້າເຈ້ຍ

---

**ໂຄງຮ່າງແນວຄວາມຄິດ:**

1) **ໜ້າປົກ**

ກ) **ຊື່ນະໂຍບາຍທີ່ຕ້ອງການສະເໜີສ້າງ:** ກໍານົດຊື່ນະໂຍບາຍ ເປັນປະໂຫຍກສັ້ນໆ ຖ້າເປັນໄປໄດ້ ໃຫ້ໃຊ້ 2-3 ຄໍາເວົ້າ.

- ຊື່ ຕ້ອງຂຽນໃຫ້ສັ້ນ, ກະທັດຮັດ, ອ່ານເຂົ້າໃຈງ່າຍ ແລະ ມີລັກສະນະສະເພາະເຈາະຈົງປະເດັນສໍາຄັນ.

ຂ) **ພາກສ່ວນທີ່ສະເໜີ:** ຊື່ ແລະ ທີ່ຢູ່ຕິດຕໍ່ ຂອງຫ້ອງການ, ບັນດາກົມ, ສະຖາບັນ ອ້ອມຂ້າງ ກະຊວງກະສິກໍາ ແລະ ປ່າໄມ້; ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງທີ່ສະເໜີຂໍສ້າງນະໂຍບາຍ.

2) **ຄວາມເປັນມາ ແລະ ເຫດຜົນ**

ກ) **ຄວາມເປັນມາ ແລະ ບ່ອນອີງ:**

ກໍານົດ ບັນຫາ, ທ່າແຮງ, ກາລະໂອກາດ ແລະ ທາງເລືອກຕ່າງໆ ທີ່ກ່ຽວຂ້ອງ ແລະ ຕິດພັນກັບນະໂຍບາຍ ທີ່ຈະສ້າງຂຶ້ນ:

- ຫຼັກການ ແລະ ບຸລິມະສິດ ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດການພັດທະນາກະສິກໍາ 2016 - 2020 ແລະ ວິໄສທັດ ຮອດປີ 2030;
- ແຜນງານບຸລິມະສິດ ຂອງລັດຖະບານ ກໍຄືກະຊວງກະສິກໍາ ແລະ ປ່າໄມ້ ເຊັ່ນ: ແຜນງານຄໍ້າປະກັນສະບຽງອາຫານແຫ່ງຊາດ, ຍຸດທະສາດໂພຊະນາການ 2010-2015 ແລະ ແຜນດໍາເນີນງານໂພຊະນາການ 2016-2020, ແຜນງານຜະລິດເປັນສິນຄ້າ ແລະ ຄໍ້າປະກັນສະບຽງອາຫານ, ແຜນງານຄຸ້ມຄອງປ່າໄມ້ແຫ່ງຊາດ ແລະ ແຜນງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ;

- ສະພາບ ຂອງບັນຫາ ທີ່ເກີດໃນແຕ່ລະພາກສ່ວນ ເຊັ່ນ: ດ້ານສິ່ງແວດລ້ອມ, ຄວາມທຸກຍາກ, ການປ່ຽນແປງດິນຟ້າອາກາດ, ບົດບາດຍິງ-ຊາຍ ແລະ ອື່ນໆ;
- ສົນທິສັນຍາສາກົນ ເຊັ່ນ: ເປົ້າໝາຍການພັດທະນາແບບຍືນຍົງ (SDG).

**ຂ) ເຫດຜົນ:** ຍ້ອນຫຍັງ ຈຶ່ງຕ້ອງສ້າງນະໂຍບາຍ ເພື່ອແກ້ໄຂບັນຫາ ແລະ ສະໜັບສະໜູນ?

- ບອກເຫດຜົນ ແລະ ຄວາມຈຳເປັນພື້ນຖານ ສຳລັບສະເໜີສ້າງນະໂຍບາຍ, ການກຳນົດບັນຫາທີ່ຈະຕ້ອງແກ້ໄຂ ຫຼື ການຊຸກຍູ້ສົ່ງເສີມ ແລະ ສະໜັບສະໜູນໃຫ້ຈະແຈ້ງ.

**ຄ) ທິດຊີ້ນຳແນວທາງ ຂອງລັດຖະບານ ກໍ່ຄື ກະຊວງກະສິກຳ ແລະ ປ່າໄມ້ ຜ່ານມາ, ປະຈຸບັນ ຫຼື ອະນາຄົດ:** ໄດ້ມີການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຫຍັງແນ່ ເພື່ອແກ້ໄຂບັນຫາ ແລະ ສືບຕໍ່ຈັດຕັ້ງປະຕິບັດ ທີ່ຕິດພັນກັບການສ້າງນະໂຍບາຍ.

**ງ) ຂໍ້ຫຍຸ້ງຍາກ ແລະ ຄວາມສ່ຽງ:** ທີ່ຄາດວ່າອາດຈະມີຄວາມສ່ຽງເກີດຂຶ້ນ ໃນເວລາຈັດຕັ້ງປະຕິບັດ ນະໂຍບາຍດັ່ງກ່າວ ໃນຕໍ່ໜ້າ.

### 3) ຈຸດປະສົງ ແລະ ຄາດໝາຍຜົນໄດ້ຮັບ ຂອງການສ້າງນະໂຍບາຍ

**ກ) ຈຸດປະສົງ:** ຕ້ອງມີສ່ວນກ່ຽວຂ້ອງກັບວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຂອງແຜນງານ ກະຊວງກະສິກຳ ແລະ ປ່າໄມ້, ໃນຍຸດທະສາດການພັດທະນາກະສິກຳ ປີ 2025 ແລະ ວິໄສທັດ ຮອດ ປີ 2030, ແຜນງານຄ້ຳປະກັນສະບຽງອາຫານ ແລະ ການຜະລິດກະສິກຳເປັນສິນຄ້າ, ຍຸດທະສາດໂພຊະນາການແຫ່ງຊາດ 2016 ແລະ ແຜນດຳເນີນງານໂພຊະນາການແຫ່ງຊາດ 2016-2020, ແຜນແມ່ບົດພັດທະນາຊົນລະກະເສດ, ຍຸດທະສາດກະສິກຳສີຂຽວ ແລະ ຍືນຍົງ.

**ຂ) ຄາດໝາຍຜົນໄດ້ຮັບ:** ການເພີ່ມຂຶ້ນຂອງສະມັດຕະພາບຜົນຜະລິດເຂົ້າ, ພືດ ແລະ ສັດ, ການເພີ່ມຂຶ້ນຂອງກຳໄລ, ທັງດ້ານປະລິມານ ແລະ ຄຸນນະພາບ, ຄວາມຫຼາກຫຼາຍຂອງອາຫານແຕ່ລະປະເພດ, ການຂະຫຍາຍຕົວຂອງເນື້ອທີ່, ການນຳໃຊ້ເຕັກນິກວິທະຍາສາດ ແລະ ເຕັກໂນໂລຊີ.

### 4) ຜົນປະໂຫຍດ, ຄາດຄະເນຄວາມສ່ຽງ ແລະ ການຈັດຕັ້ງປະຕິບັດນະໂຍບາຍ

**ກ) ຜົນປະໂຫຍດ:** ສາມາດຈັດຕັ້ງປະຕິບັດນະໂຍບາຍໃຫ້ມີປະສິດພາບ ແລະ ປະສິດທິຜົນ ເພື່ອຊ່ວຍແກ້ໄຂບັນຫາສະໜັບສະໜູນ ແລະ ສົ່ງເສີມໃຫ້ ຊາວກະສິກອນ, ກຸ່ມຜະລິດ, ຜູ້ປະກອບການ ແລະ ອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນປະໂຫຍດຫຼາຍຂຶ້ນ.

**ຂ) ການຄາດຄະເນຄວາມສ່ຽງ:** ການຈັດຕັ້ງປະຕິບັດນະໂຍບາຍ ອາດຈະມີຄວາມສ່ຽງ ຕໍ່ພາກສ່ວນໃດພາກສ່ວນໜຶ່ງ, ແຕ່ຜົນກະທົບ ແມ່ນໃຫ້ມີໜ້ອຍທີ່ສຸດ. ຍົກຕົວຢ່າງ ແລະ ເຫດຜົນທີ່ພາໃຫ້ເກີດມີຄວາມສ່ຽງ.

ຄ) **ການຈັດຕັ້ງປະຕິບັດນະໂຍບາຍ**: ຕ້ອງຂຽນມາດຕະການໃນການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງ ແນວໃດ ລວມເຖິງ ການຕິດຕາມ, ກວດກາ, ຊຸກຍູ້, ປະເມີນຜົນ, ກຳນົດງົບປະມານ, ການສ້າງແຜນ ແລະ ກຳນົດໄລຍະເວລາວັນເດືອນປີສຳເລັດ.

5) **ຂະບວນການກະກຽມ ການສ້າງ ນະໂຍບາຍ ແລະ ງົບປະມານ**

ກ) **ກະກຽມກິດຈະກຳ ແລະ ໄລຍະເວລາ:** ໃຫ້ບອກຂັ້ນຕອນ ແລະ ວິທີການ, ຕົວຊີ້ວັດ ໄລຍະເວລາ ທີ່ຕ້ອງການສ້າງນະໂຍບາຍ ຈົນສຳເລັດ ລວມທັງ ຄວາມຕ້ອງການນຳໃຊ້ການຊ່ວຍເຫຼືອທາງດ້ານວິຊາການ ພາກສ່ວນໃດ, ພາຍໃນ ຫຼື ສາກົນ?.

- ພາກສ່ວນທີ່ກະກຽມຮ່າງນະໂຍບາຍ ຕ້ອງໄດ້ຜ່ານການເຂົ້າຮ່ວມຝຶກອົບຮົມຈາກ ກົມນະໂຍບາຍ ແລະ ນິຕິກຳ ໃຫ້ເຂົ້າໃຈ ແລະ ນຳໄປຈັດຕັ້ງປະຕິບັດໄດ້;
- ກໍລະນີຮ່າງນະໂຍບາຍຕິດພັນກັບຫຼາຍພາກສ່ວນ, ພາກສ່ວນທີ່ຮ່າງນະໂຍບາຍ ຕ້ອງໄດ້ສົມທົບກົມນະໂຍບາຍ ແລະ ນິຕິກຳ ເພື່ອຈັດສົ່ງຮ່າງນະໂຍບາຍດັ່ງກ່າວ ໃຫ້ແກ່ທຸກພາກສ່ວນທີ່ກ່ຽວຂ້ອງ ປະກອບຄຳເຫັນຕາມໄລຍະເວລາທີ່ກຳນົດໄວ້ ຈາກນັ້ນກໍ່ນຳມາປັບປຸງໃຫ້ຄົບຖ້ວນສົມບູນ ແລະ ນຳສະເໜີຂັ້ນເທິງພິຈາລະນາ.

ຂ) **ກະກຽມງົບປະມານ**: ຕ້ອງຂຶ້ນແຜນງົບປະມານການໃຊ້ຈ່າຍລະອຽດຈະແຈ້ງ ເຊັ່ນ: ແຜນວຽກ, ແຜນຄົນ, ແຜນງົບປະມານ ແລະ ສິ່ງອຳນວຍຄວາມສະດວກອື່ນໆ.

## ເອກະສານຊ້ອນທ້າຍ 2: ໂຄງຮ່າງ " ນະໂຍບາຍ "

**ຈຸດປະສົງ:** ເພື່ອຂໍສະເໜີຮັບຮອງ ນະໂຍບາຍ.

**ສະເໜີໂດຍ:** ຫ້ອງການ, ບັນດາກົມ, ສະຖາບັນ ອ້ອມຂ້າງ ກະຊວງກະສິກຳ ແລະ ປ່າໄມ້; ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ.

**ສົ່ງເຖິງ:** ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເພື່ອຮັບຮອງ ຫຼື ສະເໜີຂໍອະນຸມັດ ຮັບຮອງ ແລະ ປະກາດໃຊ້ ໂດຍລັດຖະບານ.

**ຄວາມຍາວ:** ບໍ່ເກີນ 10 ໜ້າເຈ້ຍ.

---

**ໂຄງຮ່າງນະໂຍບາຍ:**

**ໜ້າປົກ**

- ໃສ່ຊື່ນະໂຍບາຍ ໃຫ້ເອົາຕາມໂຄງຮ່າງເອກະສານຊ້ອນທ້າຍ 1 ທີ່ການນຳກະຊວງໄດ້ ອະນຸມັດແລ້ວ;
- ລະບຸ ວັນທີ ເດືອນ ປີ ທີ່ສ້າງນະໂຍບາຍ ແລະ ວັນທີ ເດືອນ ປີ ທີ່ປະກາດໃຊ້.

**ນິຕິກຳປະກາດໃຊ້**

- ເອົາດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການປະກາດໃຊ້ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ ດັ່ງກ່າວ.

**ນິຍາມຄຳສັບ**

- ຂຽນອະທິບາຍຄວາມໝາຍຂອງຄຳສັບທີ່ສຳຄັນ ໃຫ້ຈະແຈ້ງ ແລະ ເຂົ້າໃຈ.

**ພາກທີ I ພາກສະເໜີ**

**1. ຄວາມເປັນມາ**

- ຂຽນບັນຍາຍສະຖານະການ, ຄວາມເປັນມາ ແລະ ປະເດັນບັນຫາທີ່ພົ້ນເດັ່ນ ທີ່ເກີດ ຂຶ້ນ.

**2. ເຫດຜົນ ແລະ ຄວາມຈຳເປັນ**

- ຍົກໃຫ້ເຫັນເຫດຜົນ ແລະ ຄວາມຕ້ອງການ ໃນການກຳນົດສ້າງນະໂຍບາຍ ເພື່ອແກ້ ໄຂປະເດັນ ຫຼື ບັນຫາ ທີ່ກ່າວມານັ້ນ.

## ພາກທີ II ຈຸດປະສົງ ແລະ ຂອດເຂດ ຂອງນະໂຍບາຍ

**1. ຈຸດປະສົງ**

- ອະທິບາຍຫຍໍ້ ຈຸດປະສົງ ຂອງນະໂຍບາຍ.

**2. ຜົນປະໂຫຍດທີ່ຈະໄດ້ຮັບ**

- ຄາດຄະເນຜົນປະໂຫຍດທີ່ຈະເກີດຂຶ້ນ ພາຍຫຼັງມີການນຳໃຊ້ນະໂຍບາຍ.

**3. ຂອບເຂດການນຳໃຊ້**

- ອະທິບາຍຫຍໍ້ຂອບເຂດການນຳໃຊ້ນະໂຍບາຍດັ່ງກ່າວ ເຊັ່ນ: ໃຊ້ໃນຂອບເຂດທົ່ວປະເທດ ຫຼື ສະເພາະເຈາະຈົງ ເຂດໃດໜຶ່ງ.

## ພາກທີ III ເນື້ອໃນຂອງນະໂຍບາຍ

- ອະທິບາຍລົງເລິກເນື້ອໃນລະອຽດຂອງນະໂຍບາຍ ພ້ອມທັງຍົກໃຫ້ເຫັນ ນະໂຍບາຍດັ່ງກ່າວຈະສະໜັບສະໜູນ ຍຸດທະສາດ, ແຜນແມ່ບົດ, ແຜນງານ ຂອງແຕ່ລະພາກສ່ວນທີ່ກ່ຽວຂ້ອງ.
- ໃຫ້ຂຽນເຖິງຄວາມສ່ຽງທີ່ອາດຈະເກີດຂຶ້ນ ແລະ ຜົນກະທົບ ກັບພາກສ່ວນໃດໜຶ່ງຈາກການປະຕິບັດນະໂຍບາຍດັ່ງກ່າວ.

## ພາກທີ IV ມາດຕະການ ແລະ ການຈັດຕັ້ງປະຕິບັດ

- ອະທິບາຍວິທີ, ຂັ້ນຕອນ ໃນການຈັດຕັ້ງປະຕິບັດນະໂຍບາຍ ພ້ອມທັງກຳນົດພາກສ່ວນຕົ້ນຕໍ ແລະ ພາກສ່ວນທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ພ້ອມທັງລະບຸໜ້າທີ່ຄວາມຮັບຜິດຊອບ.
- ຕ້ອງມີນິຕິກຳ ແລະ ມາດຕະການສະເພາະ ກ່ຽວກັບ ການຈັດຕັ້ງປະຕິບັດນະໂຍບາຍໃຫ້ຮັບປະກັນ ແລະ ມີປະສິດທິຜົນສູງ.
- ໃຫ້ກຳນົດໄລຍະເວລາ ຂອງການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ ຈັກປີ?.

## ພາກທີ V ການຕິດຕາມ ແລະ ປະເມີນຜົນ

- ກຳນົດຂະບວນການ ເພື່ອຮັບປະກັນວ່ານະໂຍບາຍດັ່ງກ່າວ ໄດ້ມີການຕິດຕາມ ແລະ ປະເມີນຜົນ.

**ຄະນະສ້າງຄໍາແນະນໍາ:**

| | | |
|---|---|---|
| 1. | ທ່ານ ປອ. ທັດສະກາ ສະພັງທອງ | ຫົວໜ້າກົມນະໂຍບາຍ ແລະ ນິຕິກໍາ |
| 2. | ທ່ານ ຈັນທະບູນ ສອນທະວີ | ຮອງຫົວໜ້າກົມນະໂຍບາຍ ແລະ ນິຕິກໍາ |
| 3. | ທ່ານ ປອ. ວົງປະພັນ ມະນີວົງ | ຫົວໜ້າພະແນກນະໂຍບາຍ |
| 4. | ທ່ານ ສົມສະໄໝ ວົງທິລາດ | ຮອງຫົວໜ້າພະແນກນະໂຍບາຍ |
| 5. | ທ່ານ ຈັນໄຊ ຄໍາບັນເສືອງ | ລັດຖະກອນວິຊາການ ພະແນກນະໂຍບາຍ |
| 6. | ທ່ານ ນາງ ສີສະຫວັນ ວົງລໍຄໍາ | ລັດຖະກອນວິຊາການ ພະແນກນະໂຍບາຍ |
| 7. | ທ່ານ ນາງ ຈັນສົມ ຄູນສົມບັດ | ລັດຖະກອນວິຊາການ ພະແນກນະໂຍບາຍ |
| 8. | ທ່ານ ສຸກສະຫວັນ ແສງດາເຮືອງຮຸ່ງ | ລັດຖະກອນວິຊາການ ພະແນກນະໂຍບາຍ |
| 9. | ທ່ານ ສຸລິເອກ ກິ່ງແກ້ວ | ລັດຖະກອນວິຊາການ ພະແນກນະໂຍບາຍ |
| 10. | ທ່ານ ນາງ ດາວສຸກສັນ ແກ້ວວົງສາ | ລັດຖະກອນວິຊາການ ພະແນກນະໂຍບາຍ |


**ຮຽບຮຽງ ໂດຍ:** **ພະແນກນະໂຍບາຍ, ກົມນະໂຍບາຍ ແລະ ນິຕິກໍາ,**
**ກະຊວງກະສິກໍາ ແລະ ປ່າໄມ້**

**ຕິດຕໍ່ປະສານງານ:** **ພະແນກນະໂຍບາຍ, ກົມນະໂຍບາຍ ແລະ ນິຕິກໍາ,**
**ກະຊວງກະສິກໍາ ແລະ ປ່າໄມ້**
**ໂທຣ: 021 417198**
**ແຟັກ: 021 417198**

**ສະໜັບສະໜູນການຈັດພິມ ໂດຍ:** **ອົງການຮ່ວມມືສາກົນແຫ່ງປະເທດ ຍີ່ປຸ່ນ**


**ການຮ່ວມມື**
**cooperation**
**between**
**MAF - JICA**